DUANGPHACHANH et al. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 2. Apr – Jun 2023. Page 01 – 11

# ຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ

**ໄພວັນ ດວງພະຈັນ[1], ສີຖານ ສຸຂະວົງ, ຄຳແສງ ທະລັງສີ, ເກດສະໜາ ກັນຍາສານ ແລະ ທົງລັດດາ ຕ້າວຈັນໄຊ**

*ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ*

[1]***ຕິດຕໍ່ພົວພັນ:*** *ໄພວັນ ດວງພະຈັນ ພະແນກການສຶກສາຫຼັງປະລິນຍາຕີ , ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ, ເບີໂທ: +856 20 5494 1541, ອີເມວ: phaivanhd2019@gmail.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 25 ສິງຫາ 2022*
*ການປັບປຸງ: 15 ມີນາ 2023*
*ການຕອບຮັບ: 05 ເມສາ 2023*

**ບົດຄັດຫຍໍ້**

ການຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງ: 1) ເພື່ອສຶກສາຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ, 2) ເພື່ອກວດສອບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ. ກຸ່ມເປົ້າໝາຍທີ່ເລືອກມາເປັນຜູ້ຊົງຄຸນວຸດທິໃນການຄົ້ນຄວ້າປະກອບດ້ວຍ ຜູ້ບໍລິຫານ, ຄູຜູ້ສອນລະດັບປະລິນຍາຕີ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ແລະ ກຸ່ມຜູ້ໃຊ້ບັນດິດຈາກວິທະຍາໄລຄູ ໃນ ສປປ ລາວ ຈຳນວນ 83 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າປະກອບມີແບບປະເມີນຄວາມເໝາະສົມ ແລະ ຄວາມເປັນໄປໄດ້, ຊຶ່ງເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ ແລະ ແບບສຳພາດຜູ້ຊົງຄຸນວຸດທິ. ວິທີການດຳເນີນການຄົ້ນຄວ້າເປັນການປະຍຸກໃຊ້ເຕັກນິກເດລຟາຍ (Delphi technique) ແລະ ວິທີການປະເມີນໂດຍໃຊ້ຮູບແບບຜູ້ຊົງຄຸນວຸດທິ (Connoisseurship Model), ຊຶ່ງປະກອບດ້ວຍ 2 ຂັ້ນຕອນ ຄື: ຂັ້ນຕອນການວິເຄາະເອກະສານເພື່ອສັງເຄາະ ແລະ ຮ່າງອົງປະກອບ, ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ແລະ ຂັ້ນຕອນການກວດສອບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຂອງອົງປະກອບ, ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ໄດ້ແກ່: ຄ່າມັດທະຍະຖານ (Median) ແລະ ຄ່າພິໄສລະຫວ່າງໄຄວໄທລ໌ (Interquartile Range).

ຜົນການຄົ້ນຄວ້າພົບວ່າ: ອົງປະກອບ ແລະ ຕົວຊີ້ວັດ ຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ ປະກອບດ້ວຍ 6 ອົງປະກອບ ແລະ 97 ຕົວຊີ້ວັດ ຄື: ອົງປະກອບດ້ານຄຸນທາດການເມືອງ ມີ 10 ຕົວຊີ້ວັດ, ອົງປະກອບດ້ານຄວາມສາມາດໃນວິຊາຊີບຄູ ມີ 23 ຕົວຊີ້ວັດ, ອົງປະກອບດ້ານຄຸນສົມບັດໃນອາຊີບຄູ ມີ 19 ຕົວຊີ້ວັດ, ອົງປະກອບດ້ານແບບແຜນການດຳລົງຊີວິດ ມີ 18 ຕົວຊີ້ວັດ, ອົງປະກອບດ້ານການປົກປັກຮັກສາກຽດສັກສີຂອງຄູ ມີ 15 ຕົວຊີ້ວັດ ແລະ ອົງປະກອບດ້ານຈັນຍາບັນໃນວິຊາຊີບຄູ ມີ 12 ຕົວຊີ້ວັດ.

**ຄຳສັບສຳຄັນ**: *ຄຸນລັກສະນະຄູຮຸ່ນໃໝ່, ຫຼັກສູດຜະລິດຄູ*

# Characteristics of New Generation Teachers, According to the Teacher Production Curriculum of The Faculty of Education at the Universities of Lao PDR

**Phaivanh DUANGPHACHANH[1], Sithane SOUKHAVONG, Khamseng THALANGSY, Kethsana KANYASAN and Honglatda TAOCHANHXAY**

*Faculty of Education, National University of Laos, Lao PDR*

***[1]Correspondence:***
*Phaivanh DUANGPHACHANH, Postgraduate division, Faculty of Education, National University of Laos, Tel: +85620 54941541, E-mail: phaivanhd2019@gmail.com*

***Article Info:***
*Submitted: Aug 25, 2022*
*Revised: Mar 15, 2023*
*Accepted: Apr 05, 2023*

**Abstract**

The objectives of study were: 1) to study the characteristics of the new generation teachers according to the teacher production curriculum of the Faculty of Education at the universities of Lao PDR; 2) to check the characteristics of the new generation teachers, according to the teacher production curriculum of the Faculty of Education at the universities of Lao PDR. The target groups of the study included; administrators, undergraduate teachers of the Faculty of Education at the universities of Lao PDR, and graduate's user from teacher training colleges in Lao PDR with the total number of 83 participants. The research tools included a suitability and feasibility assessment forms with five-rating-scale and interview guideline form. The research method was applied the Delphi technique and the evaluation method by using the connoisseurship model, which consisted of two steps including; 1) analysis of documents for synthesis and drafting of components, and 2) checking the suitability and feasibility of the components of the indicators of the characteristics of the new generation teachers, according to the teacher production curriculum. Statistical techniques used in the analysis of the data obtained included median and interquartile range.

The results were as follows: The characteristics of the composition and indicators of new generation teachers, according to the teacher production curriculum of the Faculty of Education at the universities of Lao PDR consisted of 6 components and 97 indicators including: The Political qualification component has 10 indicators, Competency in the teaching profession component has 23 indicators, Qualification in the teachers' profession component has 19 indicators, Living plan component has 18 indicators, Protection of teachers' dignity component has 15 indicators and the Ethical of the teachers' profession component has 12 indicators.

**Keywords**: *New generation teacher characteristics, Teacher production curriculum*

## 1. ພາກສະເໜີ

ບົນພື້ນຖານວິໄສທັດ ແລະ ຍຸດທະສາດທີ່ລັດຖະບານກຳນົດ ກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ພາລະກິດປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງການສຶກສາ ເພື່ອແນໃສ່ພັດທະນາລະບົບການສຶກສາ ເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ (Ministry of Education and Sports, 2020, p. 17).

ໃນໄລຍະຜ່ານມາ ເຖິງວ່າລັດຖະບານກໍ່ຄືຄູ່ຮ່ວມພັດທະນາ ໄດ້ເອົາໃຈໃສ່ລົງທຶນເຂົ້າໃນການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ກິດຈະກຳຕ່າງໆ ໃນຂະແໜງການສຶກສາ ແລະ ກິລາ ກໍ່ຕາມ ແຕ່ກໍ່ຍັງເຫັນວ່າການພັດທະນາຍັງຊັກຊ້າ ແລະ ຄຸນນະພາບກໍ່ຍັງຕ່ຳທຽບໃສ່ບັນດາປະເທດໃນພາກພື້ນ. ການຈັດລະບົບການຮຽນ-ການສອນ ແລະ ການດັດສົມກະແສເຂົ້າຮຽນຂອງນັກຮຽນ ບໍ່ທັນກຳນົດເປັນລະບົບທີ່ຊັດເຈນ, ການແກ້ໄຂສະພາບການຮຽນ-ການສອນຕາມຄ່ານິຍົມທີ່ບໍ່ສອດຄ່ອງຂອງສັງຄົມຍັງຫັນປ່ຽນຊ້າ (Ministry of Education and Sports, 2015 a, p. 8) ແຕ່ໂດຍລວມແລ້ວເຫັນວ່າ ການສຶກສາຊັ້ນສູງໄດ້ມີການຂະຫຍາຍຕົວດີພໍສົມຄວນທາງດ້ານປະລິມານ ແລະ ຄຸນະພາບໃນດ້ານການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ ແລະ ການອະນຸລັກຮັກສາວັດທະນະທຳຂອງຊາດ ຊຶ່ງເປັນພາລະກິດຫຼັກຂອງການສຶກສາຊັ້ນສູງໂດຍສະເພາະແມ່ນຢູ່ມະຫາວິທະຍາໄລ (Ministry of Education and Sports, 2015 a, pp. 94-95).

ເຖິງຢ່າງໃດກໍ່ຕາມ ໃນການລາຍງານຕິດຕາມກວດກາການປະຕິບັດການພັດທະນາການສຶກສາໃນໄລຍະຜ່ານມາ, ໄດ້ຊີ້ໃຫ້ເຫັນບັນຫາຂໍ້ຄົງຄ້າງຫຼາຍດ້ານເຊິ່ງຈຳເປັນຕ້ອງໄດ້ເອົາໃຈໃສ່ແກ້ໄຂຕື່ມ ເປັນຕົ້ນວ່າ: ຍັງມີຄວາມຈຳເປັນຫຼາຍໃນການຍົກລະດັບຄວາມຮູ້ຄວາມສາມາດຂອງຄູໃນສະຖາບັນສ້າງຄູ ເປັນຕົ້ນແມ່ນການນຳໃຊ້ເຕັກໂນໂລຊີເຂົ້າໃນການສິດສອນໃນສະພາບເງື່ອນໄຂທີ່ເຮົາຍັງຂາດເຂີນອຸປະກອນ ກໍ່ຄືສື່ການຮຽນ-ການສອນ ບໍ່ພຽງພໍໃນຫຼາຍແຫ່ງໃນປັດຈຸບັນ. ບັນຫາຫຼັກທີ່ຈຳເປັນຕ້ອງໄດ້ແກ້ໄຂ ຄື: ຫຼັກສູດສ້າງຄູຍັງບໍ່ທັນກົມກຽວກັບຫຼັກສູດການສຶກສາເດັກກ່ອນໄວຮຽນ ແລະ ສາຍສາມັນສຶກສາ; ຄຸນນະພາບຂອງນັກຮຽນນັກສຶກສາຄູທີ່ຈົບຈາກສະຖາບັນທີ່ຜະລິດຄູກໍ່ຍັງບໍ່ທັນບັນລຸໄດ້ຕາມຄວາມຕ້ອງການ ເນື່ອງຈາກວ່າຄຸນະພາບການສອນຂອງຄູໃນສະຖາບັນກໍ່ຍັງມີລັກສະນະຈຳກັດ; ຂາດສະມັດຖະພາບຄູທີ່ຄົບຊຸດແຍກຕາມລະດັບ ເພື່ອເປັນບ່ອນອີງໃຫ້ແກ່ການປະເມີນຜົນງານຄູ; ເຖິງວ່າຈະມີແຜນທີ່ເນັ້ນໃສ່ຜົນການຮຽນຂອງນັກຮຽນກໍ່ຕາມ ແຕ່ມາຮອດປັດຈຸບັນນີ້ກໍ່ຍັງບໍ່ທັນສາມາດປະຕິບັດໃຫ້ບັນລຸຜົນໄດ້ ຍ້ອນວ່າຈຸດເລັ່ງຂອງຈຸດປະສົງ, ຍຸດທະສາດ ແລະ ເປົ້າໝາຍເພື່ອປັບປຸງຄຸນນະພາບຂອງການສ້າງຄູຍັງບໍ່ສອດຄ່ອງກັນເທົ່າທີ່ຄວນກັບການປັບປຸງຜົນການຮຽນຂອງນັກຮຽນ (Ministry of Education and Sports, 2015 a, pp. 83-88).

ຈາກສະພາບບັນຫາດັ່ງກ່າວ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ຊຶ່ງເປັນສະຖາບັນການສຶກສາ ແລະ ເປັນໜ່ວຍງານຫຼັກທີ່ເຮັດໜ້າທີ່ໃນການຜະລິດຄູລະດັບປະລິນຍາຕີ ຈຳເປັນຕ້ອງມີຂະບວນການຜະລິດຄູໃຫ້ມີຄຸນລັກສະນະຄວາມເປັນຄູຕາມຄວາມຕ້ອງການ ແລະ ຄວາມຄາດຫວັງຂອງສັງຄົມຢ່າງມີຄຸນນະພາບ ແລະ ສອດຄ່ອງກັບມາດຕະຖານຄູທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້ ເພື່ອກຽມຄວາມພ້ອມຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ໃຫ້ເປັນຜູ້ທີ່ມີຄຸນລັກສະນະຄວາມເປັນຄູທີ່ດີ, ມີຄວາມຮອບຮູ້, ມີເຕັກນິກວິທີການໃນການຖ່າຍທອດຄວາມຮູ້, ມີຈະລິຍະທຳ, ມີຄວາມຮັກ ແລະ ສັດທາໃນວິຊາຊີບຄູ, ມີຈິດວິນຍານຄວາມເປັນຄູຢ່າງແທ້ຈິງ. ຈາກຄວາມສຳຄັນດັ່ງກ່າວ ເຮັດໃຫ້ຜູ້ຄົ້ນຄວ້າສົນໃຈທີ່ຈະສຶກສາເລື່ອງຄຸນລັກສະນະຄູຮຸ່ນ ໃໝ່ຕາມຫຼັກສູດຜະລິດ

ຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ໂດຍຕ້ອງການເປັນສ່ວນໜຶ່ງຂອງການສົ່ງເສີມ ແລະ ພັດທະນາຂະບວນການຜະລິດຄູລະດັບປະລິນຍາຕີ ເພື່ອໃຫ້ໄດ້ຄູທີ່ມີຄຸນນະພາບສູ່ສັງຄົມ.

ຈຸດປະສົງຂອງການຄົ້ນຄວ້າປະກອບມີ: 1) ເພື່ອສຶກສາຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ແລະ 2) ເພື່ອກວດສອບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ.

## 2. ອຸປະກອນ ແລະ ວິທີການ

ວິທີດຳເນີນການຄົ້ນຄວ້າຄັ້ງນີ້ ເປັນການປະຍຸກໃຊ້ເຕັກນິກ Delphi ແລະ ວິທີການປະເມີນໂດຍໃຊ້ຮູບແບບຜູ້ຊ່ຽວຊານຸດທິ (Connoisseurship Model), ຊຶ່ງໄດ້ແບ່ງການຄົ້ນຄວ້າອອກເປັນ 2 ຂັ້ນຕອນ ຄື: ຂັ້ນຕອນທີ 1: ສຶກສາຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ໂດຍວິເຄາະ , ສັງເຄາະເອກະສານ ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງກັບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ແລະ ຂັ້ນຕອນທີ 2: ການກວດສອບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ.

### 2.1 ກຸ່ມເປົ້າໝາຍໃນການຄົ້ນຄວ້າ

ຂັ້ນຕອນທີ 1: ໃນການສຶກສາຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ໂດຍວິເຄາະ, ສັງເຄາະເອກະສານ ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງກັບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູໂດຍພິຈາລະນາຕາມເອກະສານວິຊາການຂອງ (Chantavanich, 2011; Chumjit, 2010; Dannileson, 2011; Guyton, 1987; Tangchitsomkit, 2011; Udombunyanuphap, 2021; Yamtongcome, 2009) ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງກັບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູຂອງ (Gurney, 2007; Koonkaew, 2012; Marsh, 1996; Ministry of Education and Sports, 2015 b; Moreno, 2010; Phoratpitak, 2007; Potter & Brophy, 1988; Robert, 2008; Thammatrakul & Paul, 1974; Walls, Nardi, Minden & Hoffman, 2002) ໂດຍເກັບຮວບຮວມຂໍ້ມູນດ້ວຍວິທີການວິເຄາະເອກະສານດັ່ງກ່າວ.

ຂັ້ນຕອນທີ 2: ໃນການກວດສອບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ໂດຍກຸ່ມເປົ້າໝາຍທີ່ເລືອກມາເປັນຜູ້ຊ່ຽວຊານຸດທິ ມີ 3 ກຸ່ມຫຼັກ ໄດ້ແກ່: ກຸ່ມຜູ້ບໍລິຫານ, ກຸ່ມຜູ້ຜະລິດບັນດິດ (ຄູສອນ) ຈາກຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ ແລະ ກຸ່ມຜູ້ໃຊ້ບັນດິດຈາກວິທະຍາໄລຄູ ໃນ ສປປ ລາວ ຊຶ່ງລວມຈຳນວນທັງໝົດ 12 ກຸ່ມຍ່ອຍ, ກຸ່ມລະ 7 ຄົນ ລວມທັງໝົດ 84 ຄົນ ແລະ ໄດ້ມາເປັນຜູ້ຊ່ຽວຊານຸດທິຕົວຈິງ ຈຳນວນ 83 ຄົນ.

### 2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແບ່ງອອກເປັນ 2 ປະເພດຄື: ແບບປະເມີນ ແລະ ແບບສຳພາດເຊິ່ງແຕ່ລະແບບມີລາຍລະອຽດດັ່ງນີ້:

ແບບປະເມີນແບ່ງອອກເປັນ 3 ພາກສ່ວນ ໄດ້ແກ່: ພາກທີ 1 ແມ່ນຂໍ້ມູນທົ່ວໄປຂອງຜູ້ຕອບແບບປະເມີນທີ່ເປັນລັກສະນະກວດສອບລາຍການ (Check List), ພາກທີ 2 ແມ່ນຂໍ້ມູນກ່ຽວກັບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ເປັນແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ ຄື: ຈາກ "ເຫັນດີຫຼາຍທີ່ສຸດ" ຈົນເຖິງ "ເຫັນດີໜ້ອຍທີ່ສຸດ" ແລະ ພາກທີ 3 ແມ່ນຄຳຄິດເຫັນເພີ່ມເຕີມກ່ຽວກັບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ.

ແບບສຳພາດກຸ່ມຜູ້ຊ່ຽວຊານຸດທິທີ່ເປັນຜູ້ບໍລິຫານ, ຄູຜູ້ສອນຄະນະສຶກສາສາດ ແລະ ຜູ້ໃຊ້ບັນດິດຈາກວິທະຍາໄລຄູ ເປັນລັກສະນະຮູບແບບເຄິ່ງໂຄງສ້າງ (Semi-structured interview) ທີ່ມີຮ່າງສຳພາດ ແລະ ຄຳຖາມຫຼັກເປັນພື້ນຖານ ແຕ່ສາມາດຖາມຂໍ້ມູນຕ່າງໆ ທີ່ມີລັກສະນະສະເພາະເຈາະຈົງທີ່ກ່ຽວຂ້ອງກັບຄຳຖາມຫຼັກໄດ້. ແບບສຳພາດແບ່ງເປັນ 3 ພາກສ່ວນ ໄດ້ແກ່: ພາກທີ 1 ແມ່ນຂໍ້ມູນທົ່ວໄປຂອງຜູ້ຕອບແບບສຳພາດທີ່ເປັນລັກສະນະກວດສອບລາຍການ (Check List), ພາກທີ 2 ແມ່ນອົງປະກອບ ແລະ

ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ທີ່ຜ່ານເກນການແປຜົນການວິເຄາະຂໍ້ມູນແບບປະລິມານ ຈາກຂໍ້ມູນໃນຮອບທີ 1 ແລະ ພາກທີ 3 ແມ່ນຄໍາຄິດເຫັນເພີ່ມເຕີມເພື່ອຢືນຢັນອົງປະກອບ ແລະ ຕົວຊີ້ວັດ ຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ (ມີຊ່ອງວ່າງໃຫ້ຕື່ມເຫດຜົນການຢືນຢັນຄໍາຕອບເກົ່າ ຫຼື ປ່ຽນແປງ ອົງປະກອບ ແລະ ຕົວຊີ້ວັດ).

## 2.3 ວິທີເກັບກໍາຂໍ້ມູນ

ໃນການຄົ້ນຄວ້າຄັ້ງນີ້ ທີມຄົ້ນຄວ້າໄດ້ມີວິທີເກັບກໍາຂໍ້ມູນຂອງການຄົ້ນຄວ້າຕາມຂັ້ນຕອນດັ່ງນີ້:

1) ຂໍໜັງສືພົວພັນວຽກຈາກຄະນະບໍດີ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ.

2) ການປະເມີນຮອບທີ 1 ດໍາເນີນການລະຫວ່າງເດືອນມິຖຸນາ ເຖິງ ເດືອນກໍລະກົດ ປີ 2021, ຊຶ່ງຮອບຮວມຂໍ້ມູນໂດຍສົ່ງແບບປະເມີນໃຫ້ຜູ້ຊົງຄຸນວຸດທິທາງໄປສະນີ, ມີຜູ້ຊົງຄຸນວຸດທິຈໍານວນທັງໝົດ 84 ຄົນ ໄດ້ຮັບແບບປະເມີນກັບຄືນມາຕົວຈິງ ຈໍານວນ 83 ສະບັບ.

3) ການປະເມີນຮອບທີ 2 ດໍາເນີນໃນເດືອນສິງຫາ ປີ 2001 ໂດຍທີມຄົ້ນຄວ້າໄດ້ລົງໄປສໍາພາດກຸ່ມຜູ້ຊົງຄຸນວຸດທິ 9 ກຸ່ມຍ່ອຍ ເພື່ອຢືນຢັນອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງ ມະຫາວິທະຍາໄລ ໃນ ສປປ ລາວ.

## 2.4 ວິທີການວິເຄາະຂໍ້ມູນ

ໃນການວິເຄາະຂໍ້ມູນໄດ້ແບ່ງການວິເຄາະຂໍ້ມູນຕາມປະເພດຂໍ້ມູນທີ່ໄດ້ຈາກແບບປະເມີນ ດັ່ງນີ້:

1) ການວິເຄາະລະດັບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ ຜູ້ຄົ້ນຄວ້າວິເຄາະໂດຍການຄໍານວນຫາຄ່າມັດທະຍະຖານ (Median).

ເກນການພິຈາລະນາຄວາມເໝາະສົມໂດຍໃຊ້ຫຼັກການຊ່ວງເທົ່າກັນ (Interval equal) ໃນການປະມານຄ່າຈາກມາດຕາປະມານຄ່າ 5 ລະດັບ ຂອງຄ່າມັດທະຍະຖານ (Median) ທີ່ຄໍານວນໄດ້ດັ່ງນີ້: (Jiraro, 2021).

ຄະແນນ 1.00 - 1.79 ໝາຍເຖິງ ມີຄວາມເໝາະສົມລະດັບ ໜ້ອຍທີ່ສຸດ

ຄະແນນ 1.80 - 2.59 ໝາຍເຖິງ ມີຄວາມເໝາະສົມລະດັບ ໜ້ອຍ

ຄະແນນ 2.60 - 3.39 ໝາຍເຖິງ ມີຄວາມເໝາະສົມ ລະດັບ ປານກາງ

ຄະແນນ 3.40 - 4.19 ໝາຍເຖິງ ມີຄວາມເໝາະສົມ ລະດັບ ຫຼາຍ

ຄະແນນ 4.20 - 5.00 ໝາຍເຖິງ ມີຄວາມເໝາະສົມ ລະດັບ ຫຼາຍທີ່ສຸດ

2) ໃນການວິເຄາະຂໍ້ມູນເພື່ອຫາຄວາມສອດຄ່ອງຂອງຜົນການພິຈາລະນາຕັດສິນຂອງກຸ່ມຜູ້ບໍລິຫານ, ກຸ່ມຜູ້ຜະລິດບັນດິດ (ຄູສອນ) ຈາກຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ ແລະ ກຸ່ມຜູ້ໃຊ້ບັນດິດຈາກວິທະຍາໄລຄູ ໃນ ສປປ ລາວ. ຜູ້ຄົ້ນຄວ້າວິເຄາະຂໍ້ມູນໂດຍການຄໍານວນຄ່າພິໄສລະຫວ່າງໄຄວໄທລ໌ (Interquartile Range : IR).

ເກນພິຈາລະນາຄ່າ IR (Poolpataracheewin, 2001) ໃນການພິຈາລະນາຄວາມສອດຄ່ອງຂອງຜູ້ຊົງຄຸນວຸດທິ ໂດຍໃຊ້ຫຼັກການ $IR \leq 1.50$ ເປັນຄ່າທີ່ສະແດງເຖິງຄວາມຄິດເຫັນມີຄວາມສອດຄ່ອງ ແລະ $IR > 1.50$ ເປັນຄ່າທີ່ສະແດງເຖິງຄວາມຄິດເຫັນທີ່ບໍ່ສອດຄ່ອງກັນ.

3) ການວິເຄາະຂໍ້ມູນຈາກແບບສອບຖາມປາຍເປີດ ແລະ ຂໍ້ສະເໜີແນະເພີ່ມເຕີມໃນການຢືນຢັນຮັກສາຄໍາຕອບເກົ່າ ຫຼື ປ່ຽນແປງຄໍາຕອບຂອງຜູ້ຊົງຄຸນວຸດທິກ່ຽວກັບອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຜູ້ຄົ້ນຄວ້າໄດ້ເຮັດການວິເຄາະຂໍ້ມູນ ໂດຍການວິເຄາະເນື້ອໃນ (Content Analysis).

# 3. ຜົນໄດ້ຮັບ

ຕອນທີ 1 ຜົນການສຶກສາຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ໂດຍການສຶກສາ ແລະ ວິເຄາະແນວຄິດທິດສະດີທີ່ກ່ຽວຂ້ອງຈາກເອກະສານ, ຕໍາລາ, ບົດຄວາມ ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ລວມທັງສືບຄົ້ນຈາກອິນເຕີເນັດ ແລະ ຖານຂໍ້

ມູນຕ່າງໆ ຜູ້ຄົ້ນຄວ້າໄດ້ສັງເຄາະ ແລະ ຍົກຮ່າງອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ ໃນເບື້ອງຕົ້ນໄດ້ ຈຳນວນ 6 ອົງປະກອບ ແລະ 99 ຕົວຊີ້ວັດ ຈຳແນກຕາມອົງປະກອບ ຄື: 1) ອົງປະກອບດ້ານຄຸນທາດການເມືອງ ມີ 10 ຕົວຊີ້ວັດ, 2) ອົງປະກອບດ້ານຄວາມສາມາດໃນວິຊາຊີບຄູ ມີ 23 ຕົວຊີ້ວັດ, 3) ອົງປະກອບດ້ານຄຸນສົມບັດໃນອາຊີບຄູ ມີ 20 ຕົວຊີ້ວັດ, 4) ອົງປະກອບດ້ານແບບແຜນການດຳລົງຊີວິດ ມີ 19 ຕົວຊີ້ວັດ, 5) ອົງປະກອບດ້ານການປົກປັກຮັກສາມູນເຊື້ອຄຸນສົມບັດຂອງຄູ ມີ 16 ຕົວຊີ້ວັດ ແລະ 6) ອົງປະກອບດ້ານຈັນຍາບັນໃນວິຊາຊີບຄູ ມີ 11 ຕົວຊີ້ວັດ.

ຕອນທີ 2 ຜົນການກວດສອບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດຂອງມະຫາວິທະຍາໄລ ໃນ ສປປ ລາວ ດ້ວຍການວິເຄາະຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ, ຊຶ່ງຜົນການຄົ້ນຄວ້າຄັ້ງນີ້ ເມື່ອພິຈາລະນາຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ ພົບວ່າ ຕົວຊີ້ວັດທຸກຕົວທີ່ກຳນົດຂຶ້ນຜ່ານເກນທີ່ກຳນົດ (Mdn. > 3.50 ແລະ IR < 1.50) ໂດຍໄດ້ຮັບຄວາມເຫັນດີເຫັນພ້ອມຈາກກຸ່ມຜູ້ຊົງຄຸນວຸດທິທີ່ຕອບແບບສອບຖາມຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ. ທຸກຕົວຊີ້ວັດທີ່ສ້າງຂຶ້ນ ມີຄວາມເໝາະສົມ ແລະ ຄວາມເປັນໄປໄດ້ໃນການນຳໄປໃຊ້ກັບສະພາບຕົວຈິງໃນຫຼັກສູດການຜະລິດຄູ ແລະ ມີພຽງບາງຕົວຊີ້ວັດເທົ່ານັ້ນທີ່ໄດ້ປັບປຸງເອົາມາລວມເຂົ້າກັນ. ດັ່ງນັ້ນ, ອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ ຫຼັງຈາກການກວດສອບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ປະກອບດ້ວຍ 6 ອົງປະກອບ 97 ຕົວຊີ້ວັດ ດັ່ງນີ້:

**ອົງປະກອບທີ 1 ດ້ານຄຸນທາດການເມືອງ** ປະກອບດ້ວຍ 10 ຕົວຊີ້ວັດ ໄດ້ແກ່: 1) ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ; 2) ປະຕິບັດແນວທາງນະໂຍບາຍຂອງພັກ-ລັດ ຢ່າງຖືກຕ້ອງ; 3) ປະຕິບັດກົດໝາຍຢ່າງເຂັ້ມງວດ ; 4) ຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງທາງດ້ານທິດສະດີການເມືອງ; 5) ນຳໃຊ້ທິດສະດີການເມືອງເຂົ້າໃນການປະຕິບັດໜ້າທີ່ການສິດສອນ; 6) ມີສະຕິຕໍ່ການຈັດຕັ້ງ; 7) ປະຕິບັດພັນທະໜ້າທີ່ຕາມການມອບໝາຍຂອງການຈັດຕັ້ງ; 8) ມີສະຕິລວມໝູ່, ເພື່ອຜົນປະໂຫຍດສ່ວນລວມ; 9) ເປັນແບບຢ່າງໃນການປະຕິບັດພັນທະຂອງພົນລະເມືອງ ແລະ 10) ຫ້າວຫັນປະກອບສ່ວນການເຄື່ອນໄຫວໃນອາຊີບຄູ.

**ອົງປະກອບທີ 2 ດ້ານຄວາມສາມາດໃນວິຊາຊີບຄູ** ປະກອບດ້ວຍ 23 ຕົວຊີ້ວັດ ໄດ້ແກ່: 1) ມີຄວາມສາມາດໃນການຄິດພິຈາລະນາຢ່າງຮອບຄອບ; 2) ມີທັກສະໃນການສອນໃຫ້ຜູ້ຮຽນຮູ້ຈັກຄິດວິເຄາະ-ປະດິດສ້າງເກີດການຮຽນຮູ້; 3) ມີທັກສະໃນການພັດທະນາຫຼັກສູດ; 4) ມີທັກສະໃນການຄົ້ນຄວ້າວິທະຍາສາດໃນຊັ້ນຮຽນ; 5) ມີທັກສະໃນການປະເມີນຜົນການຮຽນຮູ້ທີ່ຫຼາກຫຼາຍ; 6) ມີທັກສະຂະບວນການແກ້ບັນຫາໃນການເຮັດວຽກ; 7) ມີທັກສະໃນການໃຊ້ພາສາອັງກິດເພື່ອການສື່ສານ; 8) ມີທັກສະການຈັດການຮຽນຮູ້ທີ່ຫຼາກຫຼາຍ; 9) ມີທັກສະການເຊື່ອມໂຍງ, ນຳໃຊ້ບົດຮຽນໃຫ້ສອດຄ່ອງກັບບໍລິບົດຂອງສັງຄົມ; 10) ມີທັກສະການວາງແຜນພັດທະນາຜູ້ຮຽນ; 11) ມີທັກສະການພັດທະນາພຶດຕິກຳຂອງຜູ້ຮຽນ; 12) ມີທັກສະການເລືອກໃຊ້ຊັບພະຍາກອນທີ່ເໝາະສົມຕາມສະພາບຂອງສະຖານສຶກສາ; 13) ມີຄວາມຮູ້ທາງວິຊາການທີ່ຮອບຮູ້ໃນສາຂາວິຊາຂອງຕົນ; 14) ມີຄວາມຊ່ຽວຊານທາງທິດສະດີຫຼັກການສອນ; 15) ມີທັກສະການຈັດກິດຈະກຳພັດທະນາຜູ້ຮຽນໃຫ້ມີຄຸນລັກສະນະທີ່ດີ; 16) ມີຄວາມສາມາດໃຊ້ເຕັກນິກຕັ້ງຄຳຖາມໃນບົດຮຽນເພື່ອກະຕຸ້ນຄວາມຄິດ; 17) ມີທັກສະຈັດການຮຽນຮູ້ໂດຍຄຳນຶງເຖິງຄວາມແຕກຕ່າງລະຫວ່າງບຸກຄົນ; 18) ມີທັກສະການຈັດການຊັ້ນຮຽນ ຫຼື ການຄວບຄຸມຊັ້ນຮຽນ; 19) ມີຄວາມສາມາດໃນການຈັດກິດຈະກຳເສີມຫຼັກສູດການຮຽນ-ການສອນ; 20) ມີເຕັກ ນິກວິທີສອນທີ່ຫຼາກຫຼາຍເພື່ອກະຕຸ້ນຄວາມສົນໃຈຂອງຜູ້ຮຽນ;

21) ສາມາດໃນການຈັດຂະບວນການເບິ່ງແຍງ, ຕິດ ຕາມ ແລະ ຊ່ວຍເຫຼືອຜູ້ຮຽນ; 22) ສາມາດໃນການຖ່າຍທອດຄວາມຮູ້ໃຫ້ຜູ້ຮຽນເກີດການຮຽນຮູ້ ແລະ 23) ສອນໂດຍເປີດໂອກາດໃຫ້ຜູ້ຮຽນສະແດງຄວາມຄິດເຫັນ ແລະ ຊັກຖາມ.

**ອົງປະກອບທີ 3 ດ້ານຄຸນສົມບັດໃນອາຊີບຄູ** ປະກອບດ້ວຍ 19 ຕົວຊີ້ວັດ ໄດ້ແກ່: 1) ມີຄວາມຮັກ ຫຼື ສັດທາໃນວິຊາຊີບຄູ; 2) ມີສະຕິ, ຮັກສາກຽດສັກສີຂອງຄູ; 3) ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ; 4) ມີນໍ້າໃຈເອື້ອເຟື້ອເພື່ອແຜ່ຕໍ່ເພື່ອນຮ່ວມອາຊີບ, ເພື່ອນຮ່ວມງານ, ສັງຄົມ; 5) ມີຄວາມເມດຕາ ສົງສານຕໍ່ເພື່ອນມະນຸດດ້ວຍກັນ; 6) ມີມາລະຍາດທີ່ດີຕໍ່ຜູ້ຮຽນ ແລະ ເພື່ອນຮ່ວມງານ; 7) ມີຄວາມກຽມພ້ອມຊ່ວຍເຫຼືອຮັບໃຊ້ວຽກງານ; 8) ປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງຜູ້ຮຽນ; 9) ປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງເພື່ອນຮ່ວມງານ-ສັງຄົມ; 10) ມີຄວາມດຸໝັ່ນ, ຫ້າວຫັນຕໍ່ການປະຕິບັດໜ້າທີ່; 11) ປະຕິບັດຕາມລະບອບ, ລະບຽບການຂອງອົງການຈັດຕັ້ງ ຫຼື ສະຖານສຶກສາ; 12) ສິດສອນຜູ້ຮຽນຢ່າງສະເໝີພາບ; 13) ປະເມີນຕີລາຄາຢ່າງຖືກຕ້ອງ, ເປັນທໍາ ຕໍ່ຄວາມສາມາດຂອງຜູ້ຮຽນ; 14) ປະຢັດ ທ່ຽງທໍາ; 15) ຕ້ານການໂລບມາກໂລພາ, ສໍ້ລາດ-ບັງຫຼວງ; 16) ດໍາເນີນການຕໍານິຕົນເອງ, ເພື່ອນຮ່ວມງານແບບສ້າງສັນໃຫ້ປົກກະຕິ; 17) ເອົາໃຈໃສ່ຊອກຮູ້ຮໍ່າຮຽນເພື່ອພັດທະນາຕົນເອງດ້ານວິຊາສະເພາະ; 18) ຮູ້ນໍາໃຊ້ພາສາຕ່າງປະເທດ, ຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ ແລະ 19) ປະຕິບັດໜ້າທີ່ ທີ່ໄດ້ຮັບການມອບໝາຍໃຫ້ມີຜົນສໍາເລັດສູງ.

**ອົງປະກອບທີ 4 ດ້ານແບບແຜນການດໍາລົງຊີວິດ** ປະກອບດ້ວຍ 18 ຕົວຊີ້ວັດ ໄດ້ແກ່: 1) ດໍາລົງຊີວິດຢ່າງມີເປົ້າໝາຍຕາມວິຊາຊີບຄູ; 2) ດໍາລົງຊີວິດດ້ວຍຄວາມມານະອົດທົນ; 3) ສາມາດຜ່ານຜ່າຄວາມຫຍຸ້ງຍາກ; 4) ມີຫົວຄິດປະດິດສ້າງໃນການສອນ; 5) ມີແບບແຜນການດໍາລົງຊີວິດແບບ "ມະຫາຊົນ" ເໝາະສົມກັບລັກສະນະສີສັນຄວາມກ້າວໜ້າຂອງສັງຄົມ; 6) ຮູ້ຊຸກຍູ້ສິ່ງເສີມວາດດໍາລົງຊີວິດແບບສີວິໄລ-ກ້າວໜ້າ; 7) ຕ້ານການດໍາລົງຊີວິດແບບຫຼູ້ຫຼາ ຫຼັງ-ຈິດໃຈຄັບແຄບ; 8) ມີແບບແຜນວິທີເຮັດວຽກທີ່ລະອຽດວ່ອງໄວ; 9) ມີຄວາມຫ້າວຫັນ, ວິທະຍາສາດ, ສີວິໄລ; 10) ສຸພາບຄ່ຽມຄົມໃນການພົວພັນກັບຜູ້ຮຽນ, ເພື່ອນຮ່ວມງານ, ສັງຄົມ; 11) ແກ້ໄຂວຽກງານຢ່າງພາວະວິໄສ; 12) ມີນໍ້າໃຈບຸກບືນ, ມີຄວາມລະອຽດອ່ອນ; 13) ນຸ່ງຖືສຸພາບຮຽບຮ້ອຍ, ແທດເໝາະກັບອາຊີບ; 14) ຊ່ວຍເຫຼືອເພື່ອນຮ່ວມງານ ເພື່ອພ້ອມກັນສໍາເລັດໜ້າທີ່; 15) ຕ້ານ ແລະ ສະກັດກັ້ນການກະທໍາທີ່ຜິດຕໍ່ລະບຽບກົດໝາຍ; 16) ມີການພົວພັນຕິດແທດກັບຜູ້ປົກຄອງຢ່າງເໝາະສົມ; 17) ມີຄວາມນັບຖືຮັກແພງເຊິ່ງກັນ ແລະ ກັນ ແລະ 18) ດໍາລົງຊີວິດແບບມີວັດທະນະທໍາທີ່ດີ.

**ອົງປະກອບທີ 5 ດ້ານການປົກປັກຮັກສາກຽດສັກສີຂອງຄູ** ປະກອບດ້ວຍ 15 ຕົວຊີ້ວັດ ໄດ້ແກ່: 1) ບໍ່ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອການກະທໍາທີ່ຜິດຕໍ່ລະບຽບ-ກົດໝາຍ; 2) ບໍ່ສ້າງຄວາມຫຍຸ້ງຍາກໃຫ້ຜູ້ຮຽນ ແລະ ສັງຄົມ; 3) ບໍ່ລັກໂລບ ຫຼື ສໍ້ໂກງໃນການສຶກສາຮໍ່າຮຽນ; 4) ບໍ່ມີທ່າທີແຂງກະດ້າງ ບີບບັງຄັບຜູ້ຮຽນໃນທຸກຮູບແບບ; 5) ບໍ່ປົກປິດດ້ານຫຍໍ້ທໍ້ໃນວຽກງານການສິດສອນ; 6) ບໍ່ກະທໍາສິ່ງທີ່ແຕະຕ້ອງເຖິງຮ່າງກາຍ-ຈິດໃຈ ແລະ ກຽດສັກສີຂອງຜູ້ຮຽນກໍຄືບຸກຄົນອື່ນ; 7) ບໍ່ມີການສອນເພີ່ມ-ຮຽນເພີ່ມ ນອກຈາກລະບຽບການ; 8) ບໍ່ຄຸ້ມຄອງ ແລະ ນໍາໃຊ້ສິ່ງເສບຕິດ; 9)ບໍ່ດື່ມສິ່ງມຶນເມົາໃນເວລາປະຕິບັດໜ້າທີ່ການສິດສອນ; 10) ບໍ່ສ້າງກຸ່ມກ້ອນ, ພັກພວກ, ທ້ອງຖິ່ນ ຫຼື ການກະທໍາອື່ນ ທີ່ພາໃຫ້ເກີດຄວາມແຕກແຍກຄວາມສາມັກຄີ; 11) ບໍ່ນໍາໃຊ້ສະຖານສຶກສາ ເພື່ອດໍາເນີນການໂຄສະນາຊວນເຊື່ອຮູບແບບຕ່າງໆ ທີ່ຝືນຕໍ່ແນວທາງນະໂຍບາຍຂອງພັກ-ລັດ; 12) ບໍ່ເອົາຊັບສິນທີ່ເປັນຂອງສ່ວນລວມໄປສວຍໃຊ້ເພື່ອຜົນປະໂຫຍດບຸກຄົນ; 13) ບໍ່ປະລະໜ້າທີ່, ຫຼີບຫຼີກຄໍາສັ່ງ, ເຄື່ອນໄຫວໄປໃນທາງທີ່ບໍ່ດີທີ່ມີຜົນສະທ້ອນທາງລົບຕໍ່ຊື່ສຽງ, ບົດບາດ ຂອງສະຖານສຶກສາ; 14) ບໍ່ເຊື່ອຖືສິ່ງງົມງວຍ-ຫຼູ້ຫຼາຫຼັງ ແລະ 15) ບໍ່ກະທໍາສິ່ງທີ່ຜິດຕໍ່ຮີດຄອງປະເພນີອັນດີງາມຂອງຊາດ.

**ອົງປະກອບທີ 6 ດ້ານຈັນຍາບັນໃນວິຊາຊີບຄູ** ປະກອບດ້ວຍ 12 ຕົວຊີ້ວັດ ໄດ້ແກ່: 1) ເປັນຄົນມີເຫດຜົນ; 2) ມີຄວາມຮັບຜິດຊອບຕໍ່ວິຊາການ ຫຼື ການສິດສອນ ; 3) ມີນໍ້າໃຈເສຍສະຫຼະເພື່ອສ່ວນລວມ; 4) ສອນໃຫ້ຜູ້

ຮຽນມີຄວາມກະຕັນຍູຮູ້ບຸນຄຸນ; 5) ອົບຮົມສັ່ງສອນໃຫ້ຜູ້ຮຽນມີຄວາມປະພຶດທີ່ດີງາມ; 6) ປະພຶດຕົນເປັນແບບຢ່າງທີ່ດີທັງທາງກາຍ, ວາຈາ, ໃຈ; 7) ມີຄວາມຊື່ສັດບໍລິສຸດ; 8) ມີຄວາມຮັກໃນການສອນ; 9) ມີຄວາມຮັກແພງ-ປາຖະໜາດີຕໍ່ຜູ້ຮຽນ; 10) ເປັນແບບຢ່າງນຳໜ້າທາງດ້ານວິຊາການ ຫຼື ການສິດສອນ; 11) ມີຄວາມກະຕືລືລົ້ນ, ບຸກບືນພັດທະນາຕົນເອງຢ່າງສະໝໍ່າສະເໝີ ແລະ 12) ບໍ່ລັກໂລບ ຫຼື ສໍ້ໂກງການຄົ້ນຄວ້າວິທະຍາສາດ ແລະ ຜົນງານຂອງຜູ້ອື່ນ.

## 4. ວິພາກຜົນ

ຈາກຜົນການຄົ້ນຄວ້າ ເລື່ອງ ຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ ທີ່ພົບວ່າອົງປະກອບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ປະກອບດ້ວຍອົງປະກອບ 6 ດ້ານ ແລະ ຕົວຊີ້ວັດຍ່ອຍ 97 ຕົວຊີ້ວັດ , ຊຶ່ງເປັນການຄົ້ນພົບອົງປະກອບຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ທີ່ມີຄວາມຄອບຄຸມດ້ານປັດໃຈນຳເຂົ້າໂດຍສະເພາະຕົວຄູຜູ້ສອນທີ່ຄວນກຽມຄວາມພ້ອມ, ດ້ານຂະບວນການໂດຍສະເພາະຂະບວນການຄົ້ນຄວ້າທີ່ຖືກຕ້ອງ, ຄວາມໜ້າເຊື່ອຖື ແລະ ດ້ານຜົນຜະລິດ, ຜົນຮັບ ຫຼື ຄຸນຄ່າຂອງບົດຄົ້ນຄວ້າ ທີ່ປະກົດຜົນດັ່ງກ່າວໜ້າຈະມາຈາກຂະບວນການຄົ້ນຄວ້າທີ່ປະກອບດ້ວຍ 2 ຂັ້ນຕອນຫຼັກ ຄື: ຂັ້ນຕອນການສຶກສາຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ແລະ ຂັ້ນຕອນການກວດສອບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ, ເປັນການປະຍຸກໃຊ້ວິທີການປະເມີນອົງປະກອບ ແລະ ຕົວຊີ້ວັດໂດຍໃຊ້ຮູບແບບຜູ້ຊົງຄຸນວຸດທິ (Connoisseurship Model), ຊຶ່ງເປັນຜູ້ບໍລິຫານທີ່ມີຄວາມຮູ້ໃນການການຮຽນ-ການສອນ, ກຸ່ມຄູຜູ້ສອນລະດັບປະລິນຍາຕີຈາກຄະນະສຶກສາສາດ ແລະ ກຸ່ມຜູ້ນຳໃຊ້ບັນດິດຈາກວິທະຍາໄລຄູ ໃນ ສປປ ລາວ ໄດ້ເຮັດການວິພາກວິຈານຢ່າງເລິກເຊິ່ງ ໂດຍໄດ້ປັບປຸງປ່ຽນແປງທາງດ້ານພາສາ ແລະ ເນື້ອໃນຂອງອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຢ່າງລະອຽດເພື່ອໃຫ້ເໝາະສົມກັບບໍລິບົດການຜະລິດຄູ ຄະນະສຶກສາສາດ ຂອງມະຫາວິທະຍາໄລ ໃນ ສປປ ລາວ. ຈາກຜົນການຄົ້ນຄວ້າທີ່ຄົ້ນພົບ ມີຄວາມສອດຄ່ອງກັບ ແນວຄິດ, ທິດສະດີທາງວິຊາການ ແລະ ບົດຄົ້ນຄວ້າວິທະຍາສາດຂອງຫຼາຍທ່ານ ໄດ້ແກ່: (Udombunyanuphap, 2021) ໄດ້ກ່າວເຖິງ ຄຸນລັກສະນະຄູຮຸ່ນໃໝ່ໃນສັດຕະວັດ 21 ປະກອບດ້ວຍ 1) ມີຄວາມສົນໃຈ ແລະ ກະຕືລືລົ້ນທີ່ຈະຮຽນຮູ້ ແລະ ເປັນບຸກຄົນແຫ່ງການຮຽນຮູ້ 2) ມີຄວາມຮອບຮູ້ດ້ານປັດຊະຍາການສຶກສາ, ໃນນະໂຍບາຍການສຶກສາ, ກົດໝາຍການສຶກສາ, ມາດຕະຖານວິຊາຊີບຄູ, ມາດຕະຖານການສຶກສາ, ຈິດຕະວິທະຍາການສຶກສາ ແລະ ຫຼັກສູດການສອນ 3) ມີຄວາມຮູ້ຄວາມສາມາດທີ່ທັນສະໄໝ, ທັນເຫດການ ແລະ ທັນຕໍ່ການປ່ຽນແປງ, ສາມາດເຊື່ອມໂຍງກັບຊຸມຊົນທ້ອງຖິ່ນເຂົ້າກັບມາດຕະຖານສາກົນໄດ້ 4) ມີຄວາມຮູ້ຄວາມສາມາດໃນວິທີການສະແຫວງຫາຄວາມຮູ້ 5) ຮູ້ຈັກ ແລະ ເຂົ້າໃຈພັດທະນາການຜູ້ຮຽນ 6) ມີຄວາມຮູ້ ແລະ ທັກສະໃນວິຊາຊີບທີ່ສອນຢ່າງເລິກເຊິ່ງ, ຊັດເຈນ, ສາມາດສອນແລ້ວຜູ້ຮຽນເຂົ້າໃຈ, ມີຄວາມສາມາດຮຽນຮູ້ໄດ້ ແລະ ສະໜຸກກັບການຮຽນຮູ້, ສອນ ແລະ ຈັດກິດຈະກຳການຮຽນຮູ້ຢ່າງເຕັມຄວາມສາມາດ, ເຕັມເວລາ ແລະ ເຕັມຫຼັກສູດ 7) ມີຄວາມສາມາດໃນການສ້າງບັນຍາກາດ ແລະ ສິ່ງແວດລ້ອມການຮຽນຮູ້ ທີ່ກະຕຸ້ນຄວາມສົນໃຈໃຝ່ຮູ້ຂອງຜູ້ຮຽນ ແລະ ມີຄວາມສຸກສະໜຸກໃນການຮຽນ-ການສອນມີຄວາມສາມາດໃນການສັງເກດ ແລະ ຮູ້ຈັກແກ້ໄຂພຶດຕິກຳ, ການເສີມແຮງ ແລະ ການລົງໂທດທີ່ເໝາະສົມ 8) ມີທັກສະການສອນທີ່ຊ່ຽວຊານ ແລະ ສ້າງສັນ ຈົນສາມາດພັດທະນາຜູ້ຮຽນໄດ້ເຕັມສັກກະຍະພາບຕາມຄວາມແຕກຕ່າງລະຫວ່າງບຸກຄົນ, ກະຕຸ້ນໃຫ້ຜູ້ຮຽນສະແດງຄວາມສາມາດໄດ້ຢ່າງເຕັມທີ່, ເນັ້ນການຈັດກິດຈະກຳທີ່ຫຼາກຫຼາຍເພື່ອສະໜອງຕອບຕໍ່ຜູ້ຮຽນ 9) ມີຄວາມຮູ້ ແລະເຂົ້າໃຈເປົ້າໝາຍ ແລະ ວິທີການຂອງຫຼັກສູດ ແລະ ການສອນ 10) ມີຄວາມສາມາດໃນການອອກແບບ, ວາງແຜນການສອນ, ຈັດກິດຈະກຳການຮຽນ-ການສອນ, ການບໍລິຫານຈັດການໃນຊັ້ນຮຽນ, ການວິໄຈ ແລະ ພັດທະນາການສອນ, ມີຄວາມເປັນຜູ້ນຳໃນການປ່ຽນແປງທາງວິຊາການທີ່ມີປະສິດທິພາບ ແລະ ມີຄວາມສາມາດວັດຜົນປະເມີນຜົນພັດທະນາການຂອງການຮຽນຮູ້ໄດ້ຫຼາກຫຼາຍວິທີຢ່າງເໝາະສົມ 11) ມີຄວາມຮັກ

ແລະ ສັດທາທີ່ຈະເປັນຄູ, ມີຄວາມເມດຕາກະລຸນາ ແລະ ເປັນເພື່ອນທີ່ດີຂອງສິດ 12) ມີຈະລິຍະທຳ, ຄຸນນະທຳ, ກິລິຍາມາລະຍາດສຸພາບຮຽບຮ້ອຍ, ຮູ້ຈັກການວາງຕົນຢູ່ໃນສິນລະທຳອັນດີເຕັມໄປດ້ວຍຄຸນນະທຳ, ຍຶດໝັ້ນຈັນຍາບັນວິຊາຊີບຄູ ແລະ ຍຶດໝັ້ນຕາມຫຼັກສາສະໜາ 13) ມີບຸກຄະລິກພາບເປັນແບບຢ່າງທີ່ດີໃນດ້ານຄຸນນະທຳ, ຈະລິຍະທຳ, ຄ່ານິຍົມ ແລະ ການດຳລົງຊີວິດ 14) ມີຄວາມຮັບຜິດຊອບໃນໜ້າທີ່, ມີຄວາມມຸ່ງໝັ້ນໃນການປະຕິບັດງານ, ເຮັດວຽກງານຢ່າງເປັນລະບົບ ແລະ ພັດທະນາຕົນເອງຢ່າງຕໍ່ເນື່ອງ 15) ມີຄວາມສາມາດໃນການປູກຝັງລະບຽບວິໄນ, ຄຸນນະທຳ, ຈະລິຍະທຳ ແລະ ຄ່ານິຍົມທີ່ດີ 16) ສາມາດຈັດກິດຈະກຳການຮຽນຮູ້, ຈັດລະບຽບເນື້ອໃນສາລະການຮຽນຮູ້ ແລະ ຈັດກິດຈະກຳການຮຽນຮູ້ ທີ່ມີປະສິດທິພາບສອດຄ່ອງກັບການພັດທະນາຂອງຜູ້ຮຽນ ຕະຫຼອດຈົນມີຄວາມສາມາດໃນການພັດທະນາຫຼັກສູດທ້ອງຖິ່ນໄດ້ກົງກັບຄວາມຕ້ອງການຂອງຊຸມຊົນທ້ອງຖິ່ນ; ສອດຄ່ອງກັບດຳລັດຂອງ (Ministry of Education and Sports, 2015 b) ກ່ຽວກັບຄຸນສົມບັດ ແລະ ຈັນຍາບັນຂອງຄູ ຊຶ່ງປະກອບດ້ວຍ 1) ຄຸນທາດການເມືອງ, 2) ຄຸນສົມບັດດ້ານອາຊີບ, 3) ແບບແຜນ ແລະ ການດຳລົງຊີວິດ, 4) ປົກປັກຮັກສາມູນເຊື້ອຄຸນສົມບັດຂອງຄູ ແລະ 5) ຈັນຍາບັນຂອງຄູລາວ; ບົດຄົ້ນຄວ້າຂອງ (Potter & Brophy, 1988) ໄດ້ສັງເຄາະບົດຄົ້ນຄວ້າວິທະຍາສາດທີ່ກ່າວເຖິງຄູທີ່ດີ ແລະ ຄຸນລັກສະນະຂອງຄູທີ່ດີໄວ້ 11 ປະການ ຄື: 1) ເຂົ້າໃຈເປົ້າໝາຍການຈັດການຮຽນຮູ້ຢ່າງຊັດເຈນ 2) ມີຄວາມຮູ້ກ່ຽວກັບວິທີສອນ ແລະ ເນື້ອໃນ 3) ແຈ້ງຈຸດປະສົງການຮຽນຮູ້ແກ່ຜູ້ຮຽນ 4) ໃຊ້ສື່ການຮຽນຮູ້ຢ່າງມີປະສິດທິພາບ 5) ປັບວິທີສອນໃຫ້ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮຽນ 6) ສອນ ແລະ ກະຕຸ້ນໃຫ້ຜູ້ຮຽນເຝິກທັກສະການຄິດ 7) ກວດສອບພັດທະນາການຂອງສະຕິປັນຍາຂອງຜູ້ຮຽນທຸກຄົນ 8) ກຳກັບການຮຽນຮູ້ໂດຍໃຫ້ຂໍ້ມູນຍ້ອນກັບ (Feedback) ຢ່າງສະໝ່ຳສະເໝີ 9) ບູລະນາການເນື້ອໃນທີ່ສອນກັບເນື້ອໃນວິຊາອື່ນໆ 10) ຮັບຜິດຊອບຕໍ່ຜົນການຮຽນຮູ້ຂອງຜູ້ຮຽນ 11) ຄິດ ແລະ ສະທ້ອນຄວາມຄິດຕໍ່ການປະຕິບັດຂອງຕົນເອງ; (Walls, Nardi, Minden & Hoffman, 2002, pp. 39-48) ໄດ້ສຶກສາການຮັບຮູ້ກ່ຽວກັບຄຸນລັກສະນະຂອງຄູທີ່ມີປະສິດທິພາບຕາມທັດສະນະຂອງນັກສຶກສາຄູ, ຄູເຝິກຫັດໃໝ່ ແລະ ຄູທີ່ມີປະສົບການ ພົບວ່າ ຄຸນລັກສະນະຂອງຄູທີ່ມີປະສິດທິພາບ ຄວນປະກອບດ້ວຍຄຸນລັກສະນະ 5 ດ້ານ ຄື 1) ດ້ານຄວາມໝັ້ນຄົງທາງອາລົມ ແລະ ຄວາມຮູ້ສຶກ ຄື: ມີຄວາມອົບອຸ່ນ, ມີຄວາມເປັນມິດ ແລະ ເປັນຫ່ວງນັກຮຽນ 2) ດ້ານທັກສະການສອນ ຄື ສາມາດຈັດການສະພາບແວດລ້ອມໃນການຮຽນຮູ້ໄດ້ຢ່າງມີປະສິດທິພາບ 3) ດ້ານແຮງຈູງໃຈຂອງຄູ ຄື: ມີຄວາມກະຕືລືລົ້ນ ແລະ ເປັນຫ່ວງ, ຮັບຜິດຊອບຕໍ່ການຮຽນ-ການສອນ 4) ດ້ານການມີສ່ວນຮ່ວມຂອງນັກຮຽນ ຄື: ເນັ້ນກິດຈະກຳທີ່ໃຫ້ຜູ້ຮຽນມີສ່ວນຮ່ວມໃນການຮຽນຮູ້ຕາມສະພາບຈິງ, ໃຊ້ຄຳຖາມໃຫ້ຜູ້ຮຽນມີປະຕິສຳພັນ ແລະ ການຮ່ວມອະພິປາຍ 5) ດ້ານກົດເກນ ແລະ ລະດັບຜົນການຮຽນ ຄື ສາມາດກະຕຸ້ນນັກຮຽນ ແລະ ຄວບຄຸມຊັ້ນຮຽນໄດ້ດີ, ຊື່ນຊົມຄວາມສຳເລັດຂອງນັກຮຽນ, ມີກົດເກນ ແລະ ຕັດສິນຜົນການຮຽນຢ່າງຍຸຕິທຳ; (Robert, 2008, pp. 61-65) ໄດ້ເຮັດການສຶກສາເພື່ອຫາຂໍ້ສະຫຼຸບກ່ຽວກັບຄຸນລັກສະນະຂອງຄູທີ່ມີປະສິດທິພາບຊຶ່ງເປັນຂະບວນການຄົ້ນຄວ້າທີ່ປະສົມປະສານກັນລະຫວ່າງການຄົ້ນຄວ້າໄລຍະຍາວ (Longitudinal) ການຄົ້ນຄວ້າແບບຄຸນນະພາບ (Qualitative) ແລະ ການຄົ້ນຄວ້າເຄິ່ງທົດລອງ (Quasi - Research) ໂດຍເກັບຮວບຮວມຂໍ້ມູນຈາກນັກສຶກສາວິຊາຊີບຄູໃນຄວາມເບິ່ງແຍງຂອງຜູ້ຄົ້ນຄວ້າ ແລະ ຄູປະຈຳການ ຈາກການອະພິປາຍ ແລະ ຂຽນລຽງຄວາມໃນຫົວຂໍ້ເລື່ອງ “ແມ່ນຫຍັງ ຄື: ຄຸນສົມບັດຂອງຄູໃນຄວາມຊົງຈຳຂອງທ່ານທີ່ສະໜັບສະໜູນໃຫ້ທ່ານຢາກເປັນຄູ” ບົດຄົ້ນຄວ້ານີ້ເປັນການຄົ້ນຄວ້າໄລຍະຍາວທີ່ໃຊ້ເວລາເກັບຂໍ້ຮວບຮວມຂໍ້ມູນຢ່າງຕໍ່ເນື່ອງເປັນເວລາ 15 ປີ ຂໍ້ມູນທີ່ໄດ້ຈາກການເປັນຮູບປະທຳຄວາມຄິດເຫັນຈາກລຽງຄວາມຂອງກຸ່ມຕົວຢ່າງສະທ້ອນແນວຄິດທີ່ຄ້າຍຄືກັນກ່ຽວກັບຄຸນລັກສະນະຂອງຄູທີ່ມີປະສິດທິພາບ ສາມາດສະຫຼຸບໄດ້ ດັ່ງນີ້: 1) ການກຽມຄວາມພ້ອມ 2) ເບິ່ງໂລກໃນແງ່ດີ 3) ຄາດຫວັງໃນຜົນສຳເລັດ ແລະ ເຊື່ອໝັ້ນໃນຕົວນັກຮຽນ 4) ມີຄວາມຄິດລິເລີ່ມສ້າງສັນ 5) ມີຄວາມຍຸຕິທຳ 6) ເຂົ້າເຖິງນັກຮຽນ 7) ສ້າງ

ບັນຍາກາດທີ່ດີໃນຫ້ອງຮຽນເຮັດໃຫ້ນັກຮຽນຮູ້ສຶກເປັນສ່ວນໜຶ່ງຂອງການຮຽນ-ການສອນ 8) ມີອາລົມຂັນ 9) ສະແດງອອກເຖິງຄວາມເຄົາລົບ ແລະ ໃຫ້ກຽດຜູ້ອື່ນ 10) ມີຄວາມເຫັນອົກເຫັນໃຈ 11) ຮູ້ຈັກໃຫ້ອະໄພ 12) ກ້າຍອມຮັບຜິດ ແລະ ກ່າວຄຳຂໍໂທດ ຜົນຈາກການວິເຄາະຂໍ້ມູນສາມາດສະຫຼຸບໄດ້ວ່າ ຄູທີ່ມີປະສິດທິພາບມັກມີຄຸນລັກສະນະທີ່ຄືກັນວ່າຢ່າງໜ້ອຍ 12 ລັກສະນະຂ້າງຕົ້ນ ແລະ ຄຸນລັກສະນະດັ່ງກ່າວສົ່ງຜົນໃນທາງບວກຕໍ່ນັກຮຽນ ແລະ ສອດຄ່ອງກັບບົດຄົ້ນຄວ້າຂອງ (Moreno, 2010, pp. 35-46) ໄດ້ເຮັດບົດຄົ້ນຄວ້າກ່ຽວກັບຄຸນສົມບັດທີ່ສຳຄັນ ແລະ ຈຳເປັນສຳລັບການເປັນຄູທີ່ມີປະສິດທິພາບ ໂດຍໃຊ້ລະບຽບວິທີການຄົ້ນຄວ້າແບບເອກະສານ (Documentary Research) ໃນການຮອບຮວມຂໍ້ມູນ ຈາກເອກະສານລາຍງານ, ການຄົ້ນຄວ້າ, ຂໍ້ມູນສະຖິຕິ ແລະ ສິ່ງພິມຕ່າງໆ ຕະຫຼອດຈົນແນວຄິດ ແລະ ທິດສະດີ ທີ່ກ່ຽວຂ້ອງກັບຄູທີ່ມີປະສິດທິພາບ ໂດຍຈຳແນກຄຸນສົມບັດທີ່ສຳຄັນ ແລະ ຈຳເປັນສຳລັບການເປັນຄູທີ່ມີປະສິດທິພາບອອກເປັນ 2 ດ້ານ ຄືດ້ານທັກສະວິຊາຊີບ ແລະ ດ້ານທັກສະສ່ວນບຸກຄົນ ຈາກການວິເຄາະ, ສັງເຄາະຂໍ້ມູນ ແລະ ການສຶກສາຮອບຮວມຂໍ້ຄິດເຫັນຂອງບຸກຄົນຕ່າງໆ ກ່ຽວກັບຄຸນສົມບັດຂອງການເປັນຄູທີ່ມີປະສິດທິພາບ ພົບວ່າ ຄຸນສົມບັດດ້ານທັກສະວິຊາຊີບທີ່ຈຳເປັນ ປະກອບດ້ວຍ: 1) ທັກສະດ້ານອົງຄວາມຮູ້ ຄູທີ່ມີປະສິດທິພາບຈະຕ້ອງມີຄວາມຮູ້ໃນເນື້ອໃນທີ່ດີ ຖ່າຍທອດເນື້ອໃນຄວາມຮູ້ໄດ້ຢ່າງມີປະສິດທິພາບ, ສາມາດຕອບໂຈດຄວາມຕ້ອງການຂອງນັກຮຽນ ຕະຫຼອດຈົນສ້າງຄວາມເຊື່ອໝັ້ນໃນຕົວຄູແກ່ນັກຮຽນໄດ້, 2) ມີທັກສະການວາງແຜນທີ່ດີ ສາມາດວາງແຜນການຈັດການຮຽນ-ການສອນໄດ້ຢ່າງມີປະສິດທິພາບພາຍໃນເວລາທີ່ເໝາະສົມ ແລະ ເປີດໂອກາດໃຫ້ນັກຮຽນສະແດງຄວາມຄິດເຫັນກ່ຽວກັບການຮຽນ-ການສອນເພື່ອນຳຂໍ້ສະເໜີແນະເຫຼົ່ານັ້ນໄປພັດທະນາສະພາບແວດລ້ອມການຮຽນຮູ້ ແລະ ວິທີການສອນຂອງຄູ, 3) ທັກສະການບໍລິຫານຈັດການໃນຫ້ອງຮຽນ ຈາກການສຶກສາພົບວ່າ ຄູທີ່ມີປະສິດທິພາບຈະມີການວາງແນວທາງການບໍລິຫານຈັດການຫ້ອງຮຽນ ຫຼື ຊັ້ນຮຽນ ໂດຍເລືອກທີ່ຈະຮັກສາສະພາບແວດລ້ອມທີ່ຜ່ອນຄອຍ ແລະ ອົບອຸ່ນພາຍໃນຫ້ອງຮຽນ ເພື່ອສົ່ງເສີມໃຫ້ເກີດການຮຽນຮູ້ ຫຼາຍກວ່າການໃຊ້ກົດຂໍ້ບັງຄັບທີ່ເຂັ້ມງວດໃນການຈັດການກັບພຶດຕິກຳຂອງນັກຮຽນໃນຫ້ອງຮຽນ, 4) ການຮັບມືກັບຄວາມແຕກຕ່າງຂອງແຕ່ລະບຸກຄົນ ຄູທີ່ມີປະສິດທິພາບຄວນຈະສາມາດປັບແຕ່ງຮູບແບບການຮຽນຮູ້ໃຫ້ເໝາະສົມກັບນັກຮຽນຂອງພວກເຂົາ ສາມາດຮັບຮູ້ເຖິງບັນຍາກາດໃນຫ້ອງຮຽນ ແລະ ສາມາດປັບປ່ຽນວິທີການຈັດການຮຽນ-ສອນໃຫ້ເໝາະສົມ ແລະ ໜ້າສົນໃຈຢູ່ສະເໝີ, 5) ທັກສະການສື່ສານ ກ່າວຄື: ຄູທີ່ມີປະສິດທິພາບຈະສາມາດສື່ສານໄດ້ຢ່າງມີປະສິດທິພາບ ແລະ ສາມາດຖ່າຍທອດເນື້ອໃນທີ່ມີຄວາມຊັບຊ້ອນດ້ວຍວິທີການທີ່ເຂົ້າໃຈງ່າຍໃຫ້ກັບນັກຮຽນໄດ້, 6) ຄວາມໝັ້ນໃຈຂອງຄູ ຈາກຜົນການສຶກສາຊີ້ໃຫ້ເຫັນວ່າ ຄວາມໝັ້ນໃຈໃນເນື້ອໃນວິຊາຊີບຄູສົ່ງຜົນໂດຍກົງຕໍ່ປະສິດທິພາບຂອງການຈັດການຮຽນການສອນ, 7) ການສ້າງແຮງບັນດານໃຈໃນການຮຽນຮູ້ ຄູທີ່ມີປະສິດທິພາບສາມາດສ້າງແຮງຈູງໃຈໃນການຮຽນຮູ້ຂອງນັກຮຽນ ແລະ ມີສ່ວນສະໜັບສະໜູນໃຫ້ນັກຮຽນຄົ້ນພົບຕົວເອງ ແລະ ສາມາດພັດທະນາສັກກະຍະພາບຂອງຕົນເອງຈົນນຳໄປສູ່ຄວາມສຳເລັດໄດ້, 8) ຄວາມເຄົາລົບຄວາມຍຸຕິທຳ ແລະ ຄວາມເທົ່າທຽມ ຄູທີ່ມີປະສິດທິພາບຈະສະແດງໃຫ້ນັກຮຽນເຫັນເຖິງ ຄວາມໜ້າເຄົາລົບ, ຄວາມຍຸຕິທຳ ແລະ ຄວາມເທົ່າທຽມຂອງແຕ່ລະບຸກຄົນໃນດ້ານຕ່າງໆ ເຊັ່ນ: ຄວາມເປັນມາ, ເຊື້ອຊາດ, ສາສະໜາ, ສະຖານະທາງເສດຖະກິດ ແລະ ອື່ນໆ ກ່າວອີກຄວາມໝາຍໜຶ່ງຄື: ຄວາມເຄົາລົບ, ຄວາມຍຸຕິທຳ ແລະ ຄວາມເທົ່າທຽມເປັນຄຸນສົມບັດພື້ນຖານທີ່ຄູທີ່ມີປະສິດທິພາບທຸກຄົນຕ້ອງມີ, 9) ການວັດ ແລະ ປະເມີນຜົນ ຄູທີ່ມີປະສິດທິພາບສາມາດໃຊ້ວິທີການວັດ ແລະ ປະເມີນຜົນການຮຽນຮູ້ທີ່ຫຼາກຫຼາຍ, ຢ່າງເໝາະສົມ ແລະ ຍຸຕິທຳ ແລະ 10) ການຮຽນຮູ້ ແລະ ພັດທະນາຕົນເອງຂອງຄູ ຄູທີ່ມີປະສິດທິພາບມັກຈະປະເມີນຄຸນນະພາບການສອນຂອງຕົນເອງຜ່ານການຮຽນຮູ້ຂອງນັກຮຽນ ເພື່ອພັດທະນາແນວການສອນຂອງຕົນເອງຢູ່ສະເໝີ ອີກທັງຍັງມີຄວາມຍິນດີທີ່ຈະສົ່ງເສີມການຮຽນຮູ້ຂອງຕົນເອງ ໂດຍການເຂົ້າຮັບການເຝິກອົບຮົມ ຫຼື ຮັບຟັງຂໍ້ສະເໜີແນະຈາກເພື່ອນຮ່ວມງານໃນລຳດັບຕໍ່ມາ.

## 5. ສະຫຼຸບ

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ ເພື່ອສຶກສາ ແລະ ກວດສອບ ຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ມະຫາວິທະຍາໄລ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ວິທີດຳເນີນການຄົ້ນຄວ້າເປັນການປະຍຸກໃຊ້ເຕັກນິກເດລຟາຍ (Delphi technique) ແລະ ວິທີການປະເມີນໂດຍໃຊ້ຮູບແບບຜູ້ຊ່ຽວຊານວຸດທິ (Connoisseurship Model) ປະກອບດ້ວຍ 2 ຂັ້ນຕອນ ຄື: ຂັ້ນຕອນການວິເຄາະເອກະສານເພື່ອສັງເຄາະ ແລະ ຮ່າງອົງປະກອບ, ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ແລະ ຂັ້ນຕອນການກວດສອບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງອົງປະກອບ ແລະ ຕົວຊີ້ວັດຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ໂດຍການວິເຄາະຄ່າມັດທະຍະຖານ (Median: Mdn), ຄ່າພິໄສລະຫວ່າງໄຄວໄທລ໌ (Interquartile Rang: IR) ສຳລັບແບບສອບຖາມໃນສ່ວນທີ່ເປັນແບບມາດຕາປະມານຄ່າ ແລະ ສັງເຄາະຂໍ້ສະເໜີແນະເພີ່ມເຕີມສຳລັບແບບສອບຖາມໃນສ່ວນທີ່ເປັນແບບຄຳຖາມປາຍເປີດ. ຊຶ່ງໄດ້ອົງປະກອບ ແລະ ຕົວຊີ້ວັດ ຄຸນລັກສະນະຄູຮຸ່ນໃໝ່ຕາມຫຼັກສູດຜະລິດຄູ ຄະນະສຶກສາສາດ ມະຫາວິທະຍາໄລ ສປປ ລາວ ປະກອບດ້ວຍ 6 ອົງປະກອບ ແລະ 97 ຕົວຊີ້ວັດ ຄື: ອົງປະກອບດ້ານຄຸນທາດການເມືອງ ມີ 10 ຕົວຊີ້ວັດ, ອົງປະກອບດ້ານຄວາມສາມາດໃນວິຊາຊີບຄູ ມີ 23 ຕົວຊີ້ວັດ, ອົງປະກອບດ້ານຄຸນສົມບັດໃນອາຊີບຄູ ມີ 19 ຕົວຊີ້ວັດ, ອົງປະກອບດ້ານແບບແຜນການດຳລົງຊີວິດ ມີ 18 ຕົວຊີ້ວັດ, ອົງປະກອບດ້ານການປົກປັກຮັກສາກຽດສັກສີຂອງຄູ ມີ 15 ຕົວຊີ້ວັດ ແລະ ອົງປະກອບດ້ານຈັນຍາບັນໃນວິຊາຊີບຄູ ມີ 12 ຕົວຊີ້ວັດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ຢູ່ໃນບົດຄວາມວິຊາການບົດນີ້ບໍ່ມີຂໍ້ຂັດແຍ່ງກັບພາກສ່ວນໃດ, ກໍລະນີມີການລະເມີດໃນຮູບການໃດກໍຕາມ ຂ້າພະເຈົ້າຍິນດີທີ່ຈະຮັບຜິດຊອບຜູ້ດຽວ.

## 7. ເອກະສານອ້າງອີງ


Chantavanich, A. (2011). *Handbook for new government officials: Towards the path of a teacher profession.* Bangkok: the office (OTEPC), Ministry of Education.

Chumjit, Y. (2010). *Self actualization for teachers. (5th Ed.).* Bangkok: Odrian store.

Dannileson, C. (2011). *Electronic Forms and Rubrics for Enhancing Profrssional Practice: A Framework for Teaching.* Association for Supervision and Curriculum Development 1703 N: Beauregard St. Alexandria.

Gurney, P. (2007). Five Factors for Effective Teaching. *New Zealand Journal of Teachers' Work 4, 2*, 89-98.

Guyton, E. (1987). Relationships among academic performance, basic skills, subject matter knowledge, and teaching skills of teacher education graduates. *Journal of Teacher Education 38* (5), 37-42.

Jiraro, P. (2021). An analysis of the median and inter-quartile range from a rating scale by assigning weights and without assigning weights to members of the same score. *Journal of Education Burapha University, 32*(1). *January -April 2021*, 6.

Marsh, C. (1996). *Handbook for Beginning Teachers.* South Melboume: Addison WesleyLongmann Australia Pty Limited.

Ministry of Education and Sports. (2015 a). *Vision until 2030, strategy until 2025 and development plan for the 5-year education and sports sector VIII (2016-2020).* Vientiane capital: Ministry of Education and Sports.

Ministry of Education and Sports. (2015 b). *Agreement of the Minister of Teacher's Qualifications and Ethics No. 1728/MOES.DTE, dated May 6, 2015.* Vientiane capital: Ministry of Education and Sports.

Ministry of Education and Sports. (2020). *Education and sports sector development plan 5 years, the IX (2021-2025).* The Vientiane capital: Ministry of Education and Sports.

Moreno, R. C. (2010). *Effective Teachers– Professional and Personal Skills.* ENSAYOS: Revista de la Facultad de Educacion de Albacete 24.

Paul, W. (1974). An Analysis of the Personality Traits of the Effective Teacher. *The Journal of Educational Research, 14* (4), 622-671.

Phoratpitak, K. (2007). *A Study of Teachership Characteristics of Catholic School Teachers under the Sangkhamonthon Chanthaburi. (Master of Education Thesis).* Bangkok: Graduate School Srinakharinwirot University.

Poolpataracheewin, C. (2001). *Future research techniques EDFR, in the technique of policy analysis Thosaporn Sirisamphan, Editor. 5th edition.* Bangkok: Chulalongkorn University.

Potter, C. A., & Brophy, J. (1988). Synthesis of research on good teaching: Insights from the work of the institute for research in teaching. *Educational Leadership 45, 5*.

Robert, J. W. (2008). Twelve characteristics of an Effective Teacher. *Educational HORIZONS*, 61-65.

Tangchitsomkit, W. (2011). *Self actualization for teachers. (3rd Ed.).* Bangkok: Odeon Store.

Thammatrakul, S., & Koonkaew, A. (2012). *A study of the characteristics of modern teachers (research report).* Phetchabun: Faculty of Education, Rajabhat University, Phetchabun.

Udombunyanuphap, N. (2021, August 12). *Characteristics of the new generation of teachers and the reform of the teacher-education curriculum in the 21st century*. Retrieved from https://educ105.wordpress.com.

Walls, T. R.,Nardi, H. A., Minden, V. M. A., & Hoffman, N. (2002). The characteristics of effective and ineffective teachers. *Teacher Education Quarterly , 29(1)*.

Yamtongcome, S. (2009). *The development of a teachers' characheristic enhancement model of goverment teachers in the scholarship project of the promotion of science and mathermatics talented teachers (PSMT) (Doctor of Philosophy Thesis).* Nakhon Pathom: graduate school Silpakorn University.